ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຍທຂ PWT

ກະຊວງໂຍທາທິການ ແລະ ຂົນສົ່ງ

ກົມຂົວທາງ

ເລກທີ 24323/ຍທຂ.ຂທ

ນະຄອນຫຼວງວຽງຈັນ, ວັນທີ: 14-11-2017

ໂຄງການສ້ອມແປງ ແລະ ຄຸ້ມຄອງຂະແໜງຂົວທາງ

ADB Loan No. 3368-LAO

# ແຈ້ງການເຂົ້າຮ່ວມປະມູນ

| | |
|---|---|
| ວັນທີແຈ້ງເຊີນ: | 20 ພະຈິກ 2017 |
| ນ້ຳເບີເງິນກູ້ ແລະ ຊື່ໂຄງການ | Loan 3368-LAO: ໂຄງການສ້ອມແປງ ແລະ ຄຸ້ມຄອງຂະແໜງຂົວທາງ |
| ກຳນົດເວລາຍື່ນຊອງປະມູນ | 04 ມັງກອນ 2018; 14:00 ມ |

1. ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ("ຜູ້ກູ້ຢືມ") ມີຈຸດປະສົງ ກູ້ຢືມເງິນຈາກທະນາຄານພັດທະນາອາຊີ (ຜູ້ໃຫ້ກູ້ຢືມ) ໃນຮູບແບບເງິນກູ້ ເພື່ອນຳໃຊ້ເຂົ້າວຽກໂຄງການສ້ອມແປງ ແລະ ຄຸ້ມຄອງຂະແໜງຂົວທາງ (RSGMP). ສ່ວນໜຶ່ງຂອງເງິນກູ້ນີ້ຈະໄດ້ນຳໃຊ້ເບີກຈ່າຍພາຍໃຕ້ສັນຍາທີ່ລະບຸຢູ່ຂ້າງເທິງນັ້ນ. ເອກະສານປະມູນໄດ້ເປີດກ້ວາງທົ່ວໄປສຳລັບຜູ້ເຂົ້າປະມູນທີ່ມີເງື່ອນໄຂຄົບຖ້ວນ ແລະ ນອນຢູ່ໃນປະເທດສະມາຊິກຂອງທະນາຄານພັດທະນາອາຊີ (ADB).

2. ກົມຂົວທາງ, ກະຊວງໂຍທາທິການ ແລະ ຂົນສົ່ງ (ຍທຂ) (ເຈົ້າຂອງໂຄງການ) ມີຄວາມຍິນດີເຊື້ອເຊີນບັນດາຜູ້ເຂົ້າຮ່ວມປະມູນທີ່ມີເງື່ອນໄຂ ແລະ ຄຸນວຸດທິແທດເໝາະກັບເງື່ອນໄຂທີ່ລະບຸໄວ້ຢູ່ໃນໝວດທີ 3 ຂອງເອກະສານປະມູນ ເພື່ອຈັດຕັ້ງປະຕິບັດ ແລະ ເຮັດສຳເລັດວຽກຢູ່ໃນສັນຍາດັ່ງຕໍ່ໄປນີ້ຢູ່ແຂວງ ອັດຕະປື (ເອີ້ນວ່າ "ວຽກໂຄງການ").

| ສັນຍາເລກທີ: | **CW-6-Att-LR 9001** |
|---|---|
| ຊື່ໂຄງການ: | ບູລະນະ, ສ້ອມແປງ ແລະ ບຳລຸງຮັກສາເສັ້ນທາງພາຍໃນແຂວງ ອັດຕະປື ເລກທີ LR-9001 ເລີ່ມແຕ່ 3 ແຍກທາງ 18B ຫາ ບ້ານ ຈະເລີນໄຊ (54.000 ກມ) |
| ຄາດຄະເນກຳນົດເວລາສັນຍາ: | 40 ເດືອນ (ວຽກບູລະນະເບື້ອງຕົ້ນກຳນົດເວລາ 24 ເດືອນ ແລະ ອີກ 16 ເດືອນ ແມ່ນວຽກບຳລຸງຮັກສາ ແລະ ສ້ອມແປງທາງໃຫ້ຢູ່ໃນສະພາບນຳໃຊ້ເປັນປົກກະຕິ, PBM) |

ການປະມູນຈັດຊື້ຈະເປັນຮູບແບບ **ສັນຍາແບບປະສົມປະສານ ບົນພື້ນຖານປະສິດຕິພາບໃນການປະຕິບັດວຽກ** (Performance Based Contract) ເຊິ່ງລວມເອົາບັນດາອົງປະກອບຕ່າງໆຮວມເຂົ້າກັນເຊັ່ນ: ວຽກບູລະນະໃນເບື້ອງຕົ້ນ, ວຽກສ້ອມແປງ ແລະ ບຳລຸງຮັກສາບາງຈຸດຢູ່ໃນຕອນທາງເປົ້າໝາຍແມ່ນເພື່ອເຮັດໃຫ້ເສັ້ນທາງຢູ່ໃນສະພາບເງື່ອນໄຂທີ່ສາມາດນຳໃຊ້ໄດ້ເປັນປົກກະຕິສຸດເສັ້ນທາງ, ນອກນັ້ນກໍຍັງປະກອບມີອົງປະກອບແບບມອບເໝົາສຳລັບວຽກສ້ອມແປງແບບປົກກະຕິ (Routine Maintenance) ບົນພື້ນຖານປະສິດຕິພາບໃນການປະຕິບັດໜ້າວຽກ. ສັນຍາສະບັບນີ້ປະກອບມີ 3 ປັດໃຈຕົ້ນຕໍ ດັ່ງທີ່ລະບຸຢູ່ໃນເອກະສານປະມູນດັ່ງນີ້:

ກ. **ວຽກບູລະນະໃນເບື້ອງຕົ້ນ** (Rehabilitation Works)
ໜ້າວຽກດັ່ງກ່າວໄດ້ລະບຸ, ວັດແທກ ແລະ ເບີກຈ່າຍໃນຮູບແບບບໍລິມາດທີ່ປະຕິບັດໄດ້ສຳເລັດຕົວຈິງຕົວຈິງ ແລະ ລາຄາຫົວໜ່ວຍທີ່ໄດ້ກຳນົດຢູ່ໃນບົບບໍລິມາດ (Bill of Quantities) ໃນຮູບແບບສັນຍາທົ່ວໄປ;

ຂ. **ວຽກສ້ອມແປງບົນພື້ນຖານປະສິດຕິພາບການປະຕິບັດ** (Performance Based Maintenance Works)
ໜ້າວຽກດັ່ງກ່າວໄດ້ມີການປະເມີນຄຸນນະພາບໃນການໃຫ້ບໍລິການໂດຍເສັ້ນທາງປົກກະຕິດີ (Service Level) ເຊິ່ງໄດ້ອະທິບາຍລາຍລະອຽດມາດຕະຖານໃນການຈັດຕັ້ງປະຕິບັດທີ່ຜູ້ຮັບເໝົາຈະຕ້ອງປະຕິບັດໃຫ້ໄດ້ຕາມຕ້ອງການ, ສຳລັບການເບີກຈ່າຍແມ່ນຈະໄດ້ເບີກຈ່າຍເປັນລາຍເດືອນຕໍ່ 1 ກິໂລແມັດ. ການເບີກຈ່າຍອາດຈະບໍ່ໄດ້ຮັບເຕັມຕາມລາຄາຫົວໜ່ວຍທີ່ລະບຸໃນໃບບົນບໍລິມາດ ສາເຫດເນື່ອງມາຈາກຄຸນນະພາບໃນການປະຕິບັດວຽກບໍ່ໄດ້ຕາມເງື່ອນໄຂທີ່ລະບຸໄວ້ໃນສັນຍາ;

ຄ. **ວຽກສຸກເສີນ** (Emmergency works)

ສຳລັບໜ້າວຽກດັ່ງກ່າວແມ່ນຈະໄດ້ກຳນົດເປັນບໍລິມາດລວມໆ (Provisional Sum) ເຊິ່ງຈະໃດ້ລວມເຂົ້າຢູ່ໃນສັນຍາ ແລະ ບໍລິມາດວຽກຕົວຈິງທີ່ປະຕິບັດໄດ້ ຈະຕ້ອງໄດ້ວັດແທກ ແລະ ເບີກຈ່າຍຕົວຈິງຕາມບໍລິມາດທີ່ປະຕິບັດໃດ້ສຳເລັດ ເຊິ່ງນຳໃຊ້ລາຄາຫົວໜ່ວຍລວມຢູ່ໃນບິນບໍລິມາດ (Bill of Quantities). ໜ້າວຽກເຫຼົ່ານີ້ຈະຕ້ອງປະຕິບັດຢ່າງຮີບດ່ວນ ພາຍຫຼັງທີ່ມີເຫດການສຸກເສີນໃດໜຶ່ງເກີດຂຶ້ນ, ຫຼື ພາຍໃນກຳນົດເວລາທີ່ໄດ້ຮັບໃບສັ່ງວຽກກໍລະນີພິເສດຈາກເຈົ້າຂອງໂຄງການ.

ປະເມີນບໍລິມາດວຽກຕົ້ນຕໍຢູ່ໃນສັນຍາປະກອບມີດັ່ງລຸ່ມນີ້:

a) ***ວຽກບູລະນະເບື້ອງຕົ້ນ (Rehabilitation Works)*** (i) ວຽກອະນາໄມ ແລະ ບຸກເບີກ, ເນື້ອທີ່ປະມານ 37,000 ມ2; (ii) ວຽກດິນ, ວຽກດິນຂຸດ, ບໍລິມາດວຽກປະມານ 36,000 ມ3; (iii) ວຽກດິນ, ວຽກດິນຖົມ ແລະ ຊັ້ນຖົມປິດທັບຕ່າງໆ, ບໍລິມາດວຽກປະມານ 18,000 ມ3; (iv) ໜ້າທາງປູດ້ວຍແຮ່, ກ້ວາງ 6 ມ (ລວມບ່າທາງ 1 ມ), ລວງຍາວປະມານ 15.1 ກິໂລແມັດ; (v) ກໍ່ສ້າງຊັ້ນຮອງພື້ນທາງ ແລະ ຊັ້ນພື້ນທາງ ແລະ ປູຢາງ 2 ຊັ້ນ (DBST), ກ້ວາງ 6 ມ ລວງຍາວປະມານ 34 ກິໂລແມັດ; (vi) ກໍ່ສ້າງໂຄງສ້າງຊັ້ນທາງປູດ້ວຍເບຕົງເສີມເຫຼັກຢູ່ບ່ອນຄ້ອຍຊັນ, ລວງຍາວປະມານ 2 ກິໂລແມັດ; (vii) ກໍ່ສ້າງທໍ່ຫຼຽມເບຕົງເສີມເຫຼັກ 1 ແຫ່ງ; (viii) ວາງທໍ່ກົມເບຕົງເສີມເຫຼັກ ຈຳນວນ 6 ແຫ່ງ, (ix) ວຽກລະບາຍນ້ຳ ແລະ ປ້ອງກັນເຊາະເຈື່ອນ, ລວງຍາວປະມານ 22,000 ມ ລວມທັງຝາຕ້ານເຈື່ອນ; (x) ສິ່ງປະກອບອື່ນໆຢູ່ໃນເສັ້ນທາງ ແລະ ວຽກອື່ນໆ ລວມທັງແຕ້ມເສັ້ນແບ່ງຊ່ອງຈະລາຈອນ, ປ້າຍສັນຍານຈະລາຈອນ, ຫຼັກ ກິໂລແມັດ ແລະ ຫຼັກປະກັນໄພ.

b) ***ວຽກສ້ອມແປງບົນພື້ນຖານປະສິດຕິພາບໃນການປະຕິບັດ:*** ວຽກສ້ອມແປງທົ່ວໄປ ແລະ ວຽກສ້ອມແປງໂຄງສ້າງຊັ້ນທາງ ແລະ ສ້ອມແປງໜ້າທາງລົດແລ່ນ ເພື່ອຍືດອາຍຸການນຳໃຊ້ເສັ້ນທາງ ແລະ ໃຫ້ຢູ່ໃນສະພາບເງື່ອນໄຂນຳໃຊ້ເປັນປົກກະຕິ;

c) ***ວຽກສ້ອມແປງສຸກເສີນ:*** ແມ່ນກິດຈະກຳຕ່າງໆ, ທີ່ເກີດຂຶ້ນໃນກໍລະນີທີ່ເປັນເຫດການສຸກເສີນ.

ລາຍລະອຽດເພີ່ມເຕີມຂອງແຕ່ລະໜ້າວຽກ ໃດ້ລະບຸໄວ້ຢູ່ໃນເອກະສານປະມູນ.

3. ການແຂ່ງຂັນປະມູນສາກົນ (ICB) ຈະໃດ້ປະຕິບັດຕາມຂັ້ນຕອນຂອງ ADB ຄືຂັ້ນຕອນດຽວ, ນຳໃຊ້ສອງ (2) ຊອງເອກະສານປະມູນ (1S2E) ແລະ ເປີດກ້ວາງໃຫ້ແກ່ຜູ້ເຂົ້າປະມູນທັງໝົດ ເຊິ່ງແມ່ນບັນດາປະເທດທີ່ແມ່ນເງື່ອນໄຂ ແລະ ເປັນປະເທດສະມາຊິກຂອງ ADB ເຊິ່ງໃດ້ລະບຸໄວ້ຢູ່ໃນເອກະສານປະມູນ.

4. ພຽງແຕ່ຜູ້ເຂົ້າປະມູນທີ່ມີຄຸນວຸດທິຕົ້ນຕໍດັ່ງຕໍ່ໄປນີ້ທີ່ສາມາດເຂົ້າຮ່ວມປະມູນໃນຄັ້ງນີ້:
   ກ.) ເງິນທຶນໝູນວຽນປະຈຳປີຕ່ຳສຸດ 5,176,000 ໂດລາສະຫະລັດ.
   ຂ.) ເງິນທຶນຕ່ຳສຸດຂອງຜູ້ເຂົ້າປະມູນ 863,000 ໂດລາສະຫະລັດ.
   ຄ.) ໃດ້ເຂົ້າຮ່ວມ ແລະ ຈັດຕັ້ງປະຕິບັດສຳເລັດຢ່າງໜ້ອຍສອງ (2) ສັນຍາ ໃນໄລຍະເວລາຫ້າ (5) ປີຜ່ານມາ ແລະ ແມ່ນສັນຍາທີ່ມີລັກສະນະຄ້າຍຄືກັນກັບສັນຍານີ້, ເຊິ່ງມີມູນຄ່າປະມູນເກີນ 4,141,000 ໂດລາສະຫະລັດ.

5. ລາຍລະອຽດຕ່າງໆ ພ້ອມທັງເອກະສານປະມູນ ເຊິ່ງຜູ້ເຂົ້າປະມູນສາມາດພົວພັນໃດ້ຕາມທີ່ຢູ່ລຸ່ມນີ້:

ທ່ານ. ລິດຕາ ຄັດຕິຍະ, ຮອງຫົວໜ້າກົມ
ກົມຂົວທາງ, ກະຊວງໂຍທາທິການ ແລະ ຂົນສົ່ງ
ຕູ້ໄປສະນີ P.O. Box 2158, ຖະໜົນລ້ານຊ້າງ, ຊັ້ນ 2 ອາຄານດ້ານໜ້າກະຊວງໂຍທາທິການ ແລະ ຂົນສົ່ງ
ນະຄອນຫຼວງວຽງຈັນ, ສປປ ລາວ.
ໂທລະສັບ.: +856 21 412714;
ແຟກ: +856 21 414132;
ທີ່ຢູ່ອີເມລ: k_litta@yahoo.com

ກຳນົດການໃນການລົງຢ້ຽມຢາມສະໜາມ ໂຄງການຈະໃດ້ຈັດຂຶ້ນໃນວັນທີ: 29 ພະຈິກ 2017; ເວລາ 13:30 ໂມງ ຢູ່ທີ່ຈຸດເລີ້ມຕົ້ນຂອງໂຄງການ ສາມແຍກທາງ 18B ກມ 13, ບ້ານ ຊ້າຍ

ສຳລັບກອງປະຊຸມກ່ອນການປະມູນ ໂຄງການຈະໃດ້ຈັດຂຶ້ນທີ່ຫ້ອງປະຊຸມ ພະແນກ ໂຍທາທິການ ແລະ ຂົນສົ່ງ ແຂວງ ອັດຕະປື ໃນວັນທີ 30 ພະຈິກ 2017; ເວລາ 15:30-16:30 ໂມງ.

ຜູ້ເຂົ້າປະມູນທີ່ມີຄວາມສົນໃຈ ສາມາດເຂົ້າຮ່ວມກອງປະຊຸມກ່ອນການປະມູນ ແລະ ຢ້ຽມຢາມສະໜາມໃດ້ເຊິ່ງກຳນົດຕາງໜ້າຜູ້ເຂົ້າຮ່ວມຢ້ຽມຢາມສະໜາມ ແລະ ກອງປະຊຸມກ່ອນການປະມູນຈາກຜູ້ເຂົ້າຮ່ວມປະມູນໜຶ່ງໆບໍ່ເກີນ 3 ທ່ານ ສ່ວນຄ່າໃຊ້ຈ່າຍທັງໝົດໃນການເດີນທາງ, ກິນຢູ່ ແລະ ພັກເຊົາຂອງຜູ້ເຂົ້າຮ່ວມ, ຜູ້ເຂົ້າປະມູນຈະຕ້ອງເປັນຜູ້ຮັບຜິດຊອບເອງ.

6. ການຈັດຊື້ເອກະສານປະມູນສະບັບເປັນພາສາອັງກິດ ຜູ້ເຂົ້າປະມູນຈະຕ້ອງປະຕິບັດດັ່ງນີ້:

   - ພົວພັນທີ່ຢູ່ຂ້າງເທິງເພື່ອສະເໜີຊື້ "ເອກະສານປະມູນສັນຍາ CW-6-Att-LR 9001, ບູລະນະເບື້ອງຕົ້ນ ແລະ ສ້ອມແປງບຳລຸງຮັກສາເສັ້ນທາງແຂວງ ໝາຍເລກ LR-9001";
   - ເອກກະສານປະມູນ 1 ຊຸດລາຄາ 1,500,000 ກີບ (LAK), ຫຼື ທຽບເທົ່າສະກຸນເງິນໂດລາສະຫະລັດ ມີມູນຄ່າເທົ່າກັບ 185 USD, ເຊິ່ງມູນຄ່າດັ່ງກ່າວເມື່ອຊື້ໄປແລ້ວນັ້ນແມ່ນບໍ່ສາມາດສົ່ງຄືນແຕ່ຢ່າງໃດ.

7. ການຍື່ນເອກະສານປະມູນ:

   - ສະຖານທີ່ຍື່ນຊອງປະມູນແມ່ນໄດ້ລະບຸຕາມທີ່ຢູ່ຂ້າງເທິງ
   - ພາຍໃນ ຫຼື ກ່ອນກຳນົດວັນ ແລະ ເວລາ: ວັນທີ 04 ມັງກອນ 2018, ເວລາ 14:00 ໂມງ.
   - ເອກະສານປະມູນຈະຕ້ອງຄັດຕິດຄັດໜັງສືຄ້ຳປະກັນການປະມູນພ້ອມ ດັ່ງທີ່ໄດ້ລະບຸຢູ່ໃນເອກະສານປະມູນ.

   ເອກະສານປະມູນຈະໄດ້ເປີດຢ່າງເປັນທາງການພາຍຫຼັງທີ່ໝົດກຳນົດເວລາສົ່ງເອກະສານປະມູນແລ້ວ ໂດຍການເຂົ້າຮ່ວມເປັນຫຼັກຖານ ແລະ ພະຍານຈາກຜູ້ຕາງໜ້າຜູ້ເຂົ້າຮ່ວມປະມູນທັງໝົດ.

8. ໃນເວລາທີ່ເປີດຊອງປະມູນ ແລະ ປຽບທຽບມູນຄ່າປະມູນນັ້ນ, ການໃຫ້ສິດທິພິເສດໃຫ້ແກ່ຜູ້ເຂົ້າຮ່ວມປະມູນ ທີ່ເປັນຜູ້ຮັບເໝົາພາຍໃນປະເທດພາຍໃນນັ້ນແມ່ນບໍ່ສາມາດປະຕິບັດໄດ້ແຕ່ຢ່າງໃດ ດັ່ງທີ່ລະບຸໄວ້ຢູ່ໃນເອກກະສານປະມູນ.

ດ້ວຍຄວາມນັບຖື,

ເພັງ ດວງເງິນ
ຫົວໜ້າກົມຂົວທາງ
ກະຊວງໂຍທາທິການ ແລະ ຂົນສົ່ງ